**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ ເລກທີ 0245 /ຫອຄ

ນະຄອນຫຼວງວຽງຈັນ, ວັນທີ 01 ກຸມພາ 2024

## ແຈ້ງການ

**ເຖິງ:** - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ

- ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ
- ວິສາຫະກິດທີ່ດຳເນີນກິດຈະການນຳເຂົ້າ ແລະ ສົ່ງອອກສິນຄ້າ ໃນຂອບເຂດທົ່ວປະເທດ

**ເລື່ອງ:** ປັດປັບປຸງລະບົບການລົງທະບຽນ ແລະ ຄຸ້ມຄອງຖານຂໍ້ມູນຜູ້ນຳເຂົ້າ ແລະ ສົ່ງອອກ

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 2072/ອຄ, ລົງວັນທີ 15 ພະຈິກ 2023;
- ອີງໃສ່ ທິດຊີ້ນຳຂອງ ທ່ານ ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຄັ້ງວັນທີ **31** ມັງກອນ **2024.**

ເພື່ອເປັນການບຳລຸງຮັກສາ ແລະ ປັບປຸງລະບົບລົງທະບຽນ ແລະ ຄຸ້ມຄອງຖານຂໍ້ມູນຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າໃຫ້ມີຄວາມສະຖຽນ ແລະ ເຊື່ອມຕໍ່ກັບລະບົບຄຸ້ມຄອງຕິດຕາມການນຳເຂົ້າ ແລະ ສົ່ງອອກ ຂອງຂະແໜງການເງິນ ແລະ ທະນາຄານ ແຫ່ງ ສປປ ລາວ ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງອອກແຈ້ງການດັ່ງນີ້:

1. ໂຈະຊົ່ວຄາວ ການຮັບຄຳຮ້ອງລົງທະບຽນຜູ້ນຳເຂົ້າ ແລະ ສົ່ງອອກ ໃໝ່ ນັບແຕ່ວັນທີ **01** ກຸມພາ **2024** ເປັນຕົ້ນໄປ.
2. ສຳລັບຄຳຮ້ອງຂໍລົງທະບຽນທີ່ໄດ້ຍື່ນເຂົ້າມາໃນລະບົບກ່ອນວັນທີ **1** ກຸມພາ **2024,** ໂດຍສະເພາະກິດຈະການທີ່ຕິດພັນກັບການສົ່ງອອກສິນຄ້າ ຊຶ່ງໄດ້ມີສັນຍາຮ່ວມກັນກັບ ລັດຖະບານ ຫຼື ຜູ້ຄ້າຢູ່ຕ່າງປະເທດ ກົມການຄ້າຕ່າງປະເທດຈະສືບຕໍ່ແກ້ໄຂໃຫ້ເປັນແຕ່ລະກໍລະນີໄປ.
3. ໃຫ້ວິສາຫະກິດທີ່ໄດ້ຮັບໃບຢັ້ງຢືນການລົງທະບຽນຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າແລ້ວ ຮີບຮ້ອນໄປພົວພັນກັບ ກົມຄຸ້ມຄອງເງິນຕາຕ່າງປະເທດ, ທະນາຄານແຫ່ງ ສປປ ລາວ (ຕິດຕໍ່ພົວພັນ 030 537 9078) ເພື່ອເປີດ ຫຼື ຫັນບັນຊີເງິນຝາກກ່ຽວກັບການນຳເຂົ້າ ແລະ ສົ່ງອອກ. ຖ້າວິສາຫະກິດໃດບໍ່ດຳເນີນການຕາມນີ້ ແມ່ນຈະບໍ່ສາມາດດຳເນີນການນຳເຂົ້າ ຫຼື ສົ່ງອອກ ສິນຄ້າ, ລວມທັງບໍ່ສາມາດດຳເນີນການຊຳລະ ແລະ ຮັບຊຳລະຈາກຕ່າງປະເທດໄດ້.
4. ມອບໃຫ້ ກົມການຄ້າຕ່າງປະເທດ ເປັນເຈົ້າການກຳນົດເງື່ອນໄຂການຈັດຕັ້ງປະຕິບັດໃຫ້ເປັນເອກະພາບ ແລະ ສົມທົບພາກສ່ວນກ່ຽວຂ້ອງ ເຜີຍແຜ່ແຈ້ງການສະບັບນີ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ເປັນບ່ອນອີງຈັດຕັ້ງປະຕິບັດຕາມທາງຄວນດ້ວຍ.

**ຫົວໜ້າຫ້ອງການ**

ຫ້ອງການ

ປອ. ບົວວັນ ວິລະວົງ

<u>ບ່ອນສົ່ງ:</u>
- ກົມການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ
- ກົມພາສີ, ກະຊວງການເງິນ
- ກົມຄຸ້ມຄອງເງິນຕາຕ່າງປະເທດ, ທະນາຄານ ແຫ່ງ ສປປ ລາວ